ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 297 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 11 APR 2014

## ຂໍ້ຕົກລົງ

## ວ່າດ້ວຍ ການເພີ່ມມູນຄ່າດັດສະນີເງິນເດືອນພະນັກງານທະນາຄານລັດ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປລາວ ສະບັບເລກທີ 05/ສພຊ ລົງວັນທີ 14 ຕຸລາ 1999;
- ອີງຕາມມະຕິຕົກລົງຂອງສະພາລັດຖະມົນຕີ ວ່າດ້ວຍລະບົບເງິນເດືອນໃໝ່ສຳລັບທະນາຄານແຫ່ງ ສປປ ລາວ ສະບັບເລກທີ 88/ປສລ ລົງວັນທີ 20 ກັນຍາ 1989;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການປະຕິບັດເງິນເດືອນ ແລະ ເງິນອຸດໜູນຕ່າງໆ ຕໍ່ພະນັກງານລັດຖະກອນ ປີ 2013-2015 ສະບັບເລກທີ 221/ລບ ລົງວັນທີ 30/5/2012;
- ອີງຕາມບົດບັນທຶກກອງປະຊຸມຄະນະປະຈຳພັກ-ຄະນະຜູ້ອຳນວຍການ ທຫລ ປະຈຳເດືອນ **ມັງກອນ 2014** ສະບັບເລກທີ 01/ຄປທ.ທຫລ ລົງວັນທີ 05/02/2014.

### ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1.** ເພີ່ມມູນຄ່າດັດສະນີເງິນເດືອນ ໃຫ້ພະນັກງານທະນາຄານລັດ ຈາກ **3.400** ກີບ/ດັດສະນີ ມາເປັນ **3.800** ກີບ/ດັດສະນີ, ເງິນເດືອນພື້ນຖານຕ່ຳສຸດ **1.520.000** ກີບ, ສູງສຸດ **4.560.000** ກີບ.

**ມາດຕາ 2.** ການຈັດຕັ້ງປະຕິບັດ ແມ່ນໃຫ້ຄິດໄລ່ເລີ່ມແຕ່ເດືອນ **04/2014.**

**ມາດຕາ 3.** ຫ້ອງການ ທຫລ, ບັນດາກົມ-ທຽບເທົ່າ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 4.** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສ.ປ.ປ. ລາວ

ຜູ້ວ່າການ

ດຣ. ສົມພາວ ໄພສິດ

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la